ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0273 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 06.02.2023

## ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ;
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ.

ເລື່ອງ: ສະໝັກເຂົ້າຮ່ວມຝຶກອົບຮົມນາໆຊາດ **(Annual International Training Courses)** ຮູບແບບອອນລາຍ ຈຳນວນ **15** ຫຼັກສູດ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສືຈາກ ຫ້ອງການ, ກະຊວງການຕ່າງປະເທດ ສະບັບເລກທີ 185/ຫກ.ອປອ, ລົງວັນທີ 26 ມັງກອນ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ສະຖານເອກອັກຄະຣາຊະທູດ ແຫ່ງຣາຊະອານາຈັກໄທ ປະຈຳ ສປປ ລາວ ໄດ້ແຈ້ງວຽນຫລັກສູດຝຶກອົບຮົມນາໆຊາດ (Annual International Training Courses) ຮູບແບບອອນລາຍ ຈຳນວນ 15 ຫຼັກສູດ, ເຊິ່ງລາຍລະອຽດແມ່ນມີເອກະສານຄັດຕິດມາພ້ອມນີ້.

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

- ໃຫ້ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມເພື່ອເຂົ້າຮ່ວມສະໝັກຝຶກອົບຮົມຫຼັກສູດດັ່ງກ່າວ ແລ້ວສົ່ງລາຍຊື່ພ້ອມແບບຟອມສະໝັກ, ສຳເນົາໜັງສືຜ່ານແດນ ແລະ ເອກະສານຕ່າງໆ ຕາມເງື່ອນໄຂ ຂອງທຶນຝຶກອົບຮົມ ເຖິງ ກົມຈັດຕັ້ງ ແລະ ພະນັກງານ ກ່ອນວັນທີ **10 ກຸມພາ 2023** ເພື່ອຈະໄດ້ສັງລວມ ແລະ ນຳສົ່ງໃຫ້ ກົມອາຊີ ປາຊີຟິກ ແລະ ອາຟຣິກາ, ກະຊວງການຕ່າງປະເທດ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ ທັງພາກເວົ້າ, ຂຽນ, ຟັງ ແລະ ອ່ານ;

ສຳລັບການສະໝັກແມ່ນຜ່ານລະບົບອອນລາຍຕາມ ເວັບໄຊ້ https://shorturl.asia/m4ZYT ຫຼື ຕາມ QR Code ດ້ານລຸ່ມ ແລະ ລາຍລະອຽດເພີ່ມເຕີມແມ່ນ ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ປ່າໄມ້ ກົມຈັດຕັ້ງແລະພະນັກງານ

ບຸນທະວີ ໄຊຍະເພັດ

1. Course Outline
2. Online Registration Form

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com